**MID-BCC – Communications for Change in Infectious Diseases in Greater Mekong Subregion**



# ການຝຶກອົບຮົມໃຫ້ແກ່ຜູ້ນຳຊຸມຊົນ ກ່ຽວກັບພະຍາດໄຂ້ຫວັດສັດປີກ H5N1

ກອງປະຊຸມ ຖອດຖອນ ບົດຮຽນ
5-6 ກັນຍາ, ໂຮງແຮມ Mercure, ນະຄອນຫຼວງວຽງຈັນ
ດຣ ຄຳມອນ ດວງພະຈັນ

USAID
FROM THE AMERICAN PEOPLE

# ເທດສະບານແຂວງຫລວງນ້ຳທາ



# ທີ່ຕັ້ງ ແລະ ຊາຍແດນ




- ແຂວງຫຼວງນ້ຳທາຕັ້ງຢູ່ທິດຕາເວັນຕົກສຽງເໜືອ ຂອງສປປ ລາວ
- ມີຊາຍແດນຕິດກັບຕ່າງປະເທດ ແລະ ແຂວງ:
- - ທິດເໜືອຕິດ : ຈີນ (140Km)
- - ທິດຕາເວັນຕົກ: ມຽນມ່າ (130Km)
- - ທິດຕາເວັນອອກ: ແຂວງອຸດົມໄຊ
- - ທິດໃຕ້ : ແຂວງບໍ່ແກ້ວ
- ມີ 1 ດ່ານສາກົນຕິດກັບ ສປຈີນ
- ມີ 3 ດ່ານທ້ອງຖິ່ນຕິດກັບ ສປຈີນ
- ມີ 1 ດ່ານທ້ອງຖິ່ນ ຕິດກັບ ປະເທດມຽນມ່າ

# ປະຊາກອນ ແລະ ການປົກຄອງ

- ປະກອບມີ 5 ເມືອງ: ນໍ້າທາ, ນາແລ, ວຽງພູຄາ, ສິງ ແລະ ລອງ
- ມີເນື້ອທີ່ທັງໝົດ :9,325 Km
- ມີເນື້ອທີ່ປ່າສະຫງວນ = 222,400 ຮຕ
- ເນື້ອທີ່ປ່າຫ□າການຜະລິດ = 44,799 ຮຕ
- ພົນລະເມືອງ: 162,747 ຄົນ, ຍິງ 82,432 ຄົນ
- ມີຈໍານວນ 355 ບ້ານ/490 ຈຸດສຸມ
- ຈໍານວນບ້ານທຸກຍາກ = 253 ບ້ານ



ເສັ້ນທາງໄປມາຫາສູ່ ເມືອງ - ເມືອງ ສ່ວນ ຫຼາຍແມ່ນ ເປັນ ເສັ້ນທາງ ຄົດລ້ຽວ ແລະ ຍັງຫຸ້ຍງຍາກ

# ປະຊາກອນ ແລະ ການປົກຄອງ



ມີຈຳນວນ 48 ກຸ່ມບ້ານ

- ຈ□ານວນຄອບຄົວທຸກຍາກ = 15,144 ຄອບຄົວ
- ມີຈ□ານວນບ 53 ບ້ານ ແບບຢ່າງສາທາລະນະສຸກ
- ຈຳນວນຄົວເຮືອນ 28,195 ຄົວເຮືອນ
- ຈຳນວນຊົນເຜົ່າ: 17 ເຜົ່າ
- ອັດຕາເພີ້ມຂອງປະຊາກອນ ແບບທຳມະຊາດ 2,3%

ດ່ານສາກົນ ບໍ່ເຕັນ ລະຫວ່າງ ລາວ - ຈີນ ທີ່ຢູ່ ຫ່າງ ອອກຈາກ ຕົວ ເມືອງ ປະມານ 58 kms

# ແຂວງຫຼວງນ້ຳທາ



ຫົນທາງ ໄປຫາຊາຍແດນ ຂ້ອນຂ້າງດີ ຍ້ອນວ່າ ໄດ້ຮັບການປັບປຸງ ເພື່ອ ການເຂົ້າເຖິງ ການຄ້າ ແລະ ການຕະຫຼາດ.

# ຄວາມເປັນມາ ແລະ ເຫດຜົນ

- ພະຍາດລະບາດແມ່ນມັກມີເປັນປະຈ□າໃນແຕ່ລະປີ
- ເຊິ່ງມັນແມ່ນຄວາມບໍ່ເພິ່ງປາດຖະໜາຂອງປະຊາຊົນ ບັນດາເຜົ່າ ເຊິ່ງເມື່ອເກີດຂື້ນແລ້ວມັນສົ່ງຜົນກະທົບຫລາຍດ້ານຕໍ່ເສດຖະກິດ ແລະສັງຄົມລວມທັງການດໍາລົງຊີວິດ ຂອງປະຊາຊົນຊາວແຂວງຫລວງນໍ້າທາ

**ປະສົບການ ໃນການລະບາດ ຂອງ H5N1 ໃນປີ 2008**

- ການລະບາດຂອງພະຍາດໄຂ້ຫວັດສັດປີກສົ່ງຜົນກະທົບໃສ່ 4 ເມືອງໃນໄລຍະຜ່ານມາ
- ການລະບາດຂອງພະຍາດໄຂ້ຫວັດສັດປີກສົ່ງຜົນກະທົບ ໃສ່ 4 ເມືອງໃນໄລຍະຜ່ານມາ
- ການຕິດເຊື້ອສ່ວນໃຫ່ຍແມ່ນພົບໃນສັດປີກ ( ບໍ່ພົບໃນຄົນ )
- ສະພາບການເກີດລະບາດແມ່ນຕໍ່ເນື່ອງກັນ ໃນ 4 ເມືອງເປັນ ໃນຊ່ວງໄລຍະເວລາ 1 ເດືອນ

# ການລະບາດ ຂອງ H5N1 ປີ 2008



# ຈຸດປະສົງ ຂອງການຝຶກອົບຮົມ

- ເສີມສ້າງຄວາມຮູ້ ຄວາມສາມາດ ໃຫ້ແກ່ອາສາສະໝັກ, ຜູ້ນຳຊຸມຊົນ, ກຸ່ມບ້ານ ແລະ ເມືອງ ໃນການວາງແຜນ - ການໂຕ້ຕອບ, ກັ້ນພະຍາດ ໃຫ້ມີປະສິດທິພາບ ເພື່ອຮັບມືການລະບາດຂອງ ໄຂ້ຫວັດສັດປີກ.

- ແນະນຳໃຫ້ທຸກພາກສ່ວນໃນຊຸມຊົນ (ຜູ້ນຳຊຸມຊົນ, ຜູ້ມີອິດທິພົນ) ໃຫ້ເຫັນບັນຫາຄວາມສຳຄັນ ຂອງພະຍາດ ໄຂ້ຫວັດສັດປີກ ແລະ ການລະບາດ, ຈຶ່ງພ້ອມກັນ ໃຫ້ຂໍ້ມູນຂ່າວສານ ທີ່ຖືກຕ້ອງ ໃນການປ້ອງກັນ - ຄວບຄຸມ ໂດຍນຳໃຊ້ ສື່ ແລະ ອຸປະກອນທີ່ມີ

- ເພີ້ມການມີສ່ວນຮ່ວມຂອງຊຸມຊົນ ແລະ ບ້ານ ເຂົ້າມາໃນການວາງແຜນ ແລະ ຈັດຕັ້ງປະຕິບັດ ການເຝົ້າລະວັງ, ການລາຍງານ, ການສື່ສານ ແລະ bio-security.

# ຜູ້ເຂົ້າຮ່ວມ



ມີ 18 ທ່ານ ທີ່ເປັນຕົວແທນຂອງ 3 ບ້ານ ( ນາຍບ້ານ, ອສສບ, ແມ່ຍິງ, ..) ຂອງ ເມືອງ ລອງ

# ຜູ້ເຂົ້າຮ່ວມ



ດຣ ຄຳຈັນ ກຸງດຕິຍະວົງ ຫົວໜ້າ ສາຂາເມືອງສິງ ເປັນປະທານ ໃນການເປີດການຝຶກອົບຮົມ. ມີຜູ້ເຂົ້າຮ່ວມ ທັງໝົດ 21 ທ່ານ.

# ຜູ້ເຂົ້າຮ່ວມ




ມີຕົວແທນ 29 ທ່ານ ຈາກ 6 ບ້ານ ຂອງ ເມືອງ ນໍ້າທາ ເຂົ້າຮ່ວມ

# ອຸປະກອນໃນການຝຶກ: ຊຸດຄວາມຮູ້ AI ແລະ ແຜ່ນພິກ AI







ອຸປະກອນຫຼັກໃນການຝຶກອົບຮົມ ແມ່ນ ຊຸດຄວາມຮູ້ພະຍາດໄຂ້ຫວັດສັດປີກ ເຊິ່ງ ປະກອບມີ: ປິດເຕີ, ປື້ມຄູ່ມື, ແຜ່ນຊີດີ ແລະ ອື່ນໆ. ຊຸດຄວາມຮູ້ນີ້ແມ່ນ ໄດ້ ພັດທະນາ ໂດຍ ຄູ່ຮ່ວມງານ ຫຼາຍພາກສ່ວນ ທີ່ມີ ຫ້ອງການປະນງານ ເປັນຜູ້ນຳພາ.

# ເຄື່ອງມື ໃນການຝຶກອົບຮົມ







<u>ສາທິດ</u> – ເພື່ອສະແດງ ໃຫ້ເຫັນ ຂັ້ນຕອນ ຂອງການລ້າງມື ທີ່ຖືກຕ້ອງ

<u>ບົດບາດສົມມຸດ</u> – ເພື່ອສະແດງ ໃຫ້ເຫັນ ບົດບາດ ຂອງຜູ້ນໍາຊຸມຊົນ ໃນການລະດົມຊາວບ້ານ ໃຫ້ມີສ່ວນຮ່ວມ ໃນການ ປ້ອງກັນພະຍາດ ໄຂ້ຫວັດສັດປີກ

# ເຄື່ອງມື ໃນການຝຶກອົບຮົມ







ກໍລະນີສຶກສາ, ການປະກອບ ຄໍາ ຄິດຄໍາເຫັນ ແລະ ການມີ ສ່ວນ ຮ່ວມ ທັງໝົດ ແມ່ນ ວິທີການ ການຮຽນຮູ້ ແບບຜູ້ໃຫ່ຍ ເພື່ອໃຫ້ ຜູ້ເຂົ້າຮ່ວມ ໄດ້ມີການ ວາງແຜນ ໃນການຈັດຕັ້ງປະຕິບັດ

# ການແກ້ໄຂບັນຫາ ທາງດ້ານພາສາ





ກະຕຸກຊຸກຍູ້ໃຫ້ ຜູ້ນຳຊຸມຊົນ ອາຄ່າ ເຂົ້າມາມີສ່ວນຮ່ວມ

# ການແຈກຢາຍ ສື່ໂຄສະນາ ສຸຂະສຶກສາ








ທຸກເມືອງ ທີ່ເຂົ້າຮ່ວມ ແມ່ນ ໄດ້ ຮັບ ອຸປະກອນ ສື່ໂຄສະນາ

# ຜົນໄດ້ຮັບ - ຄວາມຮູ້ກ່ຽວກັບ AI






ການປະເມີນຜົນ ກ່ອນ ແລະ ຫຼັງ ການຝຶກອົບຮົມ ໄດ້ສະແດງໃຫ້ເຫັນວ່າ: ຜູ້ເຂົ້າຮ່ວມ ມີ ຄວາມຮູ້ ກ່ຽວກັບ ໄຂ້ຫວັດສັດປີກ ເພີ້ມຂື້ນ. ຕົວຢ່າງ ຢູ່ ແຂວງຫຼວງນ້ຳທາ ທີ່ເຄີຍ ມີ ການລະບາດ ໃນປີ 2008, ພວກເຂົາເວົ້າວ່າ ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບພະຍາດ ນີ້ ຈາກ ທີມງານສຸຂະສຶກສາຂັ້ນເມືອງ ທີ່ໄດ້ລົງສາໂຄສະນາເຜີຍແຜ່.

# ຜົນໄດ້ຮັບ

- ການຝຶກອົບຮົມ ໃຫ້ແກ່ຜູ້ນຳຊຸມຊົນ ນີ້ແມ່ນ ເຮັດໃຫ້ ຜູ້ເຂົ້າຮ່ວມ ມີຄວາມມັ້ນໃຈ ເພີ່ມຂື້ນ ໃນການໃຫ້ຂໍ້ມູນ ກ່ຽວກັບພະຍາດ ໄຂ້ຫວັດ ສັດປີກ ແກ່ຊຸມຊົນຂອງ ພວກເຂົາ ແລະ ແນ່ນອນມັນແມ່ນ ການກຽມພ້ອມຕໍ່ ການປ້ອງກັນ ການລະບາດຂອງພະຍາດ ອື່ນໆ.
- ການຝຶກອົບຮົມນີ້ ຍັງເຮັດໃຫ້ ຜູ້ນຳຊຸມຊົນ ເຂົາໃຈເລິກ ກ່ຽວກັບ ບົດບາດ ຂອງຕົນ ໃນການໃຫ້ຂໍ້ມູນ ແກ່ ຊາວບ້ານ ໃນເວລາ ມີບໍ່ມີການລະບາດ ແລະ ມີການ ລະບາດ ຂອງພະຍາດ.

# ບົດຮຽນທີ່ຖອດຖອນໄດ້

- ຜູ້ນຳຊຸມຊົນ ໄດ້ມີໂອກາດ ເຂົ້າຮ່ວມໃນການຝຶກອົບຮົມ ກໍ່ຈະເຮັດໃຫ້ພວກເຂົາ ເຂົ້າໃຈ ແລະ ສາມາດ ປະກອບສ່ວນ ຊ່ວຍເຫຼືອ ສະໜັບສະໜູນ ກິດຈະກຳ ໃນຊຸມຊົນ.
- ຜູ້ນຳຊຸມຊົນ ແມ່ນ ມີຄວາມສຳຄັນ ຫຼາຍ ໃນການມີສ່ວນຮ່ວມ ຂອງຊຸມຊົນ ແລະ ຍັງມີອິດທິພົນໃນການ ເຂົ້າເຖິງ - ປະຕິບັດ ໃນລະດັບຄົວເຮືອນ. ການຝຶກອົມຮົມ ແມ່ນ ເຮັດໃຫ້ເຂົາ ມີຄວາມໜ້າເຊື່ອຖື ຫຼາຍຂື້ນ ໃນການເປັນແຫຼ່ງຂໍ້ມູນ ແກ່ຊຸມຊົນ.
- ຊັບພະຍາກອນ ແມ່ນມີຄວາມຈຳກັດ. ແຕ່ ຕ້ອງມີການຝຶກອົບຮົມຢ່າງຕໍ່ເນື່ອງ ໃຫ້ຊຸຊົນ ນັ້ນກໍ່ເພື່ອ ກະຕຸກຊຸກຍູ້ ໃຫ້ ມີສ່ວນຮ່ວມ ຫຼືອາດເສີມການຝຶກອົບຮົມນີ້ ໃສ່ ກິດຈະກຳອື່ນ ເຊັ່ນ ການກຽມພ້ອມຕໍ່ໄພພິບັດ ຫຼື ອື່ນໆ.

USAID FROM THE AMERICAN PEOPLE